ຂອງຟາມລ້ຽງສັດຕ້ອງໄດ້ຂໍອະນຸຍາດສ້າງຕັ້ງຟາມກ່ອນ ແລະ ປະກອບເອກະສານຂໍຂຶ້ນທະບຽນຟາມ ຫລື ຕໍ່ທະບຽນຟາມ ມີດັ່ງນີ້:

1) ໃບຄໍາຮ້ອງ 1 ສະບັບ;
2) ໃບຢັ້ງຢືນທີ່ຢູ່ 1 ສະບັບ;
3) ໃບອະນຸຍາດສ້າງຕັ້ງຟາມ;
4) ຮູບ 3x4 ຊມ 2 ໃບ.

<u>ໝາຍເຫດ</u>: ສໍາລັບຄົນຕ່າງປະເທດຕ້ອງມີ ໜັງສືຜ່ານແດນ, ໃບອະນຸຍາດພັກເຊົາ ແລະ ໃບອະນຸຍາດອອກແຮງງານ ເພີ່ມ.

2. ຫ້າມຜູ້ປະກອບການ, ເຈົ້າຂອງຟາມ, ບຸກຄົນ ຫລື ນິຕິບຸກຄົນ ສ້າງຕັ້ງຟາມໃໝ່, ຂະຫຍາຍ ຫລື ຕໍ່ເຕີມຟາມ ຟາມລ້ຽງສັດ ແລະ ຟາມລ້ຽງປາ ຂອງຕົນເອງ ໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງການລ້ຽງສັດ ແລະ ການປະມົງເມືອງ, ຂັ້ນນະຄອນຫລວງ ແລະ ພາກສ່ວນທີ່ກ່ຽວຂ້ອງ;
3. ມອບໃຫ້ໜ່ວຍງານຄຸ້ມຄອງການລ້ຽງສັດ ແລະ ໜ່ວຍງານຄຸ້ມຄອງການປະມົງ ເປັນຜູ້ຄຸ້ມຄອງ, ສ້າງແຜນ, ດຸນດ່ຽງ, ຈັດສັນຮອບວຽນການຜະລິດ ຂອງບໍລິສັດ, ຜູ້ປະກອບການ ແລະ ຟາມ ໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ;
4. ໃຫ້ໜ່ວຍງານລ້ຽງສັດ ແລະ ການປະມົງເມືອງ ກວດກາ, ຕິດຕາມ, ຄຸ້ມຄອງການນໍາເຂົ້າ, ການລ້ຽງ ແລະ ການຈໍາໜ່າຍສັດ, ການເຄື່ອນຍ້າຍສັດ ແລະ ປາ ໃນເມືອງຂອງຕົນເອງ. ພ້ອມທັງເປັນເຈົ້າການປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ໃນ ການກວດກາ ໂດຍສະເພາະດ້ານນິຕິກໍາ ຕາມລະບຽບກົດໝາຍ;
5. ໃຫ້ໜ່ວຍງານຄຸ້ມຄອງການລ້ຽງສັດ ແລະ ໜ່ວຍງານຄຸ້ມຄອງການປະມົງ ສົມທົບກັບໜ່ວຍງານລ້ຽງສັດ ແລະ ການປະມົງເມືອງ ເປັນເຈົ້າການເຜີຍແຜ່ ແຈ້ງການສະບັບນີ້ ໃຫ້ແກ່ຜູ້ປະກອບການ, ເຈົ້າຂອງຟາມລ້ຽງສັດ ແລະ ເຈົ້າຂອງຟາມລ້ຽງປາ ໃຫ້ຮັບຮູ້ຢ່າງກວ້າງຂວາງ ແລະ ທົ່ວເຖິງ ໃນນະຄອນຫລວງວຽງຈັນ;
6. ຜູ້ປະກອບການ, ເຈົ້າຂອງຟາມລ້ຽງສັດ ແລະ ເຈົ້າຂອງຟາມລ້ຽງປາຈົ່ງໃຫ້ຄວາມຮ່ວມມືໃນການຈັດຕັ້ງ ການຂຶ້ນທະບຽນຟາມລ້ຽງສັດ ແລະ ຟາມລ້ຽງປາ ຕາມລະບຽບການ;
7. ມອບໃຫ້ເຈົ້າໜ້າທີ່ສັດຕະວະແພດ ແລະ ເຈົ້າໜ້າທີ່ປະມົງ ເມືອງ, ຂັ້ນນະຄອນຫລວງວຽງຈັນ ດໍາເນີນການກວດກາ ຟາມລ້ຽງສັດ ແລະ ຟາມລ້ຽງປາ ຕາມສິດ ແລະ ໜ້າທີ່ຂອງຕົນ;
8. ມາດຕະການຕໍ່ຜູ້ລະເມີດໃຫ້ປະຕິບັດຕາມ ກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ, ສະບັບເລກທີ 03/ສພຊ ລົງວັນທີ 25 ກໍລະກົດ 2008, ພາກທີ IX ມາດຕາທີ 92-97 ແລະ ກົດໝາຍວ່າດ້ວຍການປະມົງ, ສະບັບເລກທີ 03/ສພຊ ລົງວັນທີ 09 ກໍລະກົດ 2009, ພາກທີ VIII ມາດຕາທີ 63-68.

ດັ່ງນັ້ນ, ຈຶ່ງອອກແຈ້ງການສະບັບນີ້ເພື່ອຊາບທົ່ວເຖິງກັນຢ່າງກວ້າງຂວາງ ແລະ ນໍາໄປຈັດຕັ້ງໃຫ້ມີໝາກຜົນດີ.

ຫົວໜ້າ ຂະແໜງລ້ຽງສັດ ແລະ ການປະມົງ ນະຄອນຫລວງວຽງຈັນ

<u>ບ່ອນສົ່ງ:</u>

- ພະແນກກະສິກໍາ ແລະ ປ່າໄມ້ນະຄອນຫລວງວຽງຈັນ 1 ສະບັບ ເພື່ອລາຍງານ;
- ກົມລ້ຽງສັດ ແລະ ການປະມົງ 1 ສະບັບ ເພື່ອລາຍງານ;
- ກະສິກໍາ ແລະ ປ່າໄມ້ເມືອງ 9 ເມືອງງລະ 1 ສະບັບ ເພື່ອຊາບ;
- ໜ່ວຍງານລ້ຽງສັດ ແລະ ການປະມົງເມືອງ 9 ເມືອງງລະ 1 ສະບັບ ເພື່ອຈັດຕັ້ງປະຕິບັດ;
- ຜູ້ປະກອບການລ້ຽງສັດ ແລະ ການປະມົງ 1 ສະບັບ;
- ເກັບມ້ຽນ 1 ສະບັບ.

ຂະແໜງ ລ້ຽງສັດແລະການປະມົງ

ພັດສະລີ ພິດສະ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ພະແນກກະສິກຳ ແລະ ປ່າໄມ້ປະຈຳນະຄອນຫລວງວຽງຈັນ

ຂະແໜງລ້ຽງສັດ ແລະ ການປະມົງ

377

ເລກທີ______/ຂລປ.ນວ

ວັນທີ......06 DEC 2016

# ແຈ້ງການ

**ເຖິງ:** ໜ່ວຍງານລ້ຽງສັດ ແລະ ການປະມົງເມືອງ, ໜ່ວຍງານຄຸ້ມຄອງການລ້ຽງສັດ, ໜ່ວຍງານຄຸ້ມຄອງການປະມົງ, ຜູ້ປະກອບການ, ຟາມລ້ຽງສັດ ແລະ ຟາມລ້ຽງປາ

**ເລື່ອງ:** ການຂຶ້ນທະບຽນຟາມລ້ຽງສັດ ແລະ ການຂຶ້ນທະບຽນຟາມລ້ຽງປາ ໃນນະຄອນຫລວງວຽງຈັນ ປະຈຳປີ 2017.

- ອີງຕາມ ກົດໝາຍ ວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ, ສະບັບເລກທີ 03/ສພຊ ລົງວັນທີ 25 ກໍລະກົດ 2008;
- ອີງຕາມ ກົດໝາຍວ່າດ້ວຍການປະມົງ, ສະບັບເລກທີ 03/ສພຊ ລົງວັນທີ 9 ກໍລະກົດ 2009;
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍການຄຸ້ມຄອງກິດຈະການຟາມລ້ຽງສັດ ໃນ ສປປ ລາວ, ເລກທີ 0209/ກປ ວັນທີ 6 ກຸມພາ 2013;
- ອີງຕາມ ດຳລັດວ່າດ້ວຍການຄຸ້ມຄອງການເຄື່ອນຍ້າຍສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ, ເລກທີ 230/ລບ ວັນທີ 4 ມິຖຸນາ 2012.

ປະຈຸບັນ ນະຄອນຫລວງວຽງຈັນ ມີການລ້ຽງສັດເປັນແບບຟາມຢ່າງກ້ວາງຂວາງ ເປັນຕົ້ນແມ່ນຟາມລ້ຽງງົວ, ໝູ, ສັດປີກ ແລະ ປາ ທີ່ນຳໃຊ້ເຕັກນິກ, ວິຊາການເຂົ້າໃນການຜະລິດ, ໃນການຄຸ້ມຄອງການຜະລິດ, ການກອດກາຟາມ, ການດຸນດ່ຽງການສະໜອງ ແລະ ຄວາມຕ້ອງການ ໃຫ້ເປັນໄປຕາມແຜນການທີ່ວາງໄວ້ ຂະແໜງ ລ້ຽງສັດ ແລະ ການປະມົງ ໄດ້ມີການຈັດຕັ້ງການຂຶ້ນທະບຽນຟາມລ້ຽງສັດ ແລະ ຟາມລ້ຽງປາ ແຕ່ປີ 2012 ແລະ ໃນສົກປີ 2016 ນີ້ ໄດ້ຂຶ້ນທະບຽນຟາມລ້ຽງສັດ ໄດ້ທັງໝົດ 356 ຟາມ ເທົ່າກັບ 84% ຂອງສະຖິຕິຟາມ, ເຖິງຟາມຈະມີຟາມລ້ຽງສັດ ແລະ ປາ ຂຶ້ນທະບຽນຟາມແລ້ວ ແຕ່ການສ້າງຕັ້ງຟາມກໍ່ບໍ່ໄດ້ເຮັດ ແລະ ມີຟາມຈຳນວນໜຶ່ງບໍ່ໄດ້ຂຶ້ນທະບຽນຟາມ, ເພື່ອເປັນການຫັນວຽກງານດັ່ງກ່າວ ໃຫ້ເຂົ້າສູ່ລະບຽບກົດໝາຍ ແລະ ການຄຸ້ມຄອງກິດຈະການຟາມລ້ຽງສັດ ໃນອະນາຄົດເທື່ອລະກ້າວ.

ຂະແໜງລ້ຽງສັດ ແລະ ການປະມົງນະຄອນຫລວງວຽງຈັນ ອອກແຈ້ງການ:

1. ການຂຶ້ນທະບຽນຟາມລ້ຽງສັດ ແລະ ທະບຽນຟາມລ້ຽງປາ ໃນນະຄອນຫລວງວຽງຈັນ ປະຈຳປີ 2017 ເຈົ້າ